# ສະຫຼຸບວຽກງານການຮ່ວມມືກັບສາກົນ ວຽກງານມໍລະດົກໂລກວັດພູຈຳປາສັກ



ແຂວງຈຳປາສັກຈັດກອງປະຊຸມ ສະຫຼຸບວຽກງານໂຄງການການຮ່ວມມືສາກົນຄັ້ງທີ III ຄືໂຄງການບູລະນະມໍລະດົກໂລກພາກໃຕ້( FSP ) ແລະ ໂຄງການຊ່ວຍເຫຼືອເພື່ອການພັດທະ

ອ່ານຕໍ່ໜ້າ ໙

## ສະຫຼຸບວຽກງານການຮ່ວມມື...............................

ນາ ( AFD ) ເຂົ້າໃນວຽກງານປັບປຸງຜັງເມືອງ ສຳລັບມໍລະດົກໂລກວັດພູຈຳປາສັກ.

ກອງປະຊຸມຈັດຂຶ້ນໃນວັນທີ 16 ພຶດສະພາ 2017 ທີ່ຫ້ອງວ່າການປົກຄອງແຂວງ ເຊິ່ງໃຫ້ກຽດເປັນປະທານຂອງທ່ານ ບົວລິນ ວົງພະຈັນ ຮອງ ເຈົ້າແຂວງງຈຳປາສັກ ປະທານຄະນະກຳມະການມໍລະດົກໂລກຂັ້ນແຂວງ. ມີທ່ານຮອງຫົວໜ້າກົມມໍລະດົກໂລກ, ຮອງ ຫົວໜ້າກົມເຄຫາຜັງເມືອງ, ບັນດາທ່ານຕາງໜ້າຈາກອົງການຈັດຕັ້ງສາກົນ ພ້ອມຊ່ຽວຊານປະຈຳໂຄງການ. ພ້ອມນີ້ຍັງມີເຈົ້າເມືອງ,ຮອງເຈົ້າເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມທ່ານ ບົວລິນ ວົງພະຈັນ ໄດ້ກ່າວມີຄຳເຫັນເນື້ອໃນສຳຄັນໃຫ້ຮູ້ວ່າ: ໄລຍະຜ່ານມາພັກ-ລັດ ແລະ ປະຊາຊົນແຂວງຈຳປາສັກໄດ້ມີຄວາມເອົາໃຈໃສ່ສູງ ໃນການປົກປັກຮັກສາ ແລະ ສົ່ງເສີມຄຸນຄ່າມໍລະດົກໂລກວັດພູຈຳປາສັກ, ຜົນງານອັນທີ່ປະຕິເສດບໍ່ໄດ້ກໍ່ຄືການສະໜັບສະໜູນຊ່ວຍເຫຼືອຂອງບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ໂດຍສະເພາະອົງ ການສະຫະປະຊາຊາດເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ ຫຼື ຢູແນສະໂກ ທີ່ໄດ້ເອົາໃຈໃສ່ຕະຫຼອດມາ. ການປົກປັກຮັກສາມໍລະດົກໂລກ ທາງດ້ານວັດທະນະທຳແຫ່ງນີ້ ເຖິງວ່າຈະມີຄວາມຫຍຸ້ງຍາກຫຼາຍດ້ານແຕ່ສິ່ງທີ່ເປັນພື້ນຖານກວ່າໝູ່ກໍຄືການ ຄຸ້ມຄອງປົກປັກຮັກສາພື້ນທີ່ ແລະ ການອະນຸລັກຮັກສາອົງປະກອບຫຼັກມໍລະດົກກໍຄືຕົວອາຄານສະຖານບູຮານເຊິ່ງທັງສອງໂຄງການ FSP ແລະ AFD ໄດ້ປະກອບສ່ວນຫຼວງຫຼາຍເຂົ້າໃນ ວຽກງານດັ່ງກ່າວ ແລະ ມີຜົນສຳເລັດສູງ ໂດຍສະເພາະການກໍ່ສ້າງບຸກຄະລາກອນໃຫ້ມີຄວາມຮູ້ຄວາມສາມາດ, ການຄຸ້ມຄອງພື້ນທີ່ຕາມລະບຽບຫຼັກການ ດ້ວຍການກຳນົດເປັນແຜນຜັງພື້ນ ທີ່ເມືອງພ້ອມອົງປະກອບຕ່າງໆ. ມາຮອດປັດຈຸບັນທັງ 2 ໂຄງການກຳລັງ ຢູ່ໃນຂັ້ນຕອນສຸດທ້າຍ. ດັ່ງນັ້ນຈຶ່ງມີກອງປະຊຸມຄັ້ງນີ້ຂຶ້ນ ເພື່ອຕີລາຄາຜົນການຈັດຕັ້ງປະຕິບັດໂຄງການພ້ອມທັງ ວາງແຜນຈັດຕັ້ງປະຕິບັດໂຄງການໃຫ້ສຳເລັດຕາມວັດຖຸປະສົງລະດັບຄາດ ໝາຍທີ່ວາງໄວ້.

ທ່ານ ອຳພົນ ແສງພະຈັນ ຮອງຫົວໜ້າຫ້ອງການມໍລະດົກໂລກວັດພູຈຳປາສັກ ໄດ້ຂຶ້ນລາຍງານຜົນສຳເລັດໃນການຈັດຕັ້ງປະຕິບັດຂອງ 2 ໂຄງການ ເຊິ່ງໄດ້ຍົກໃຫ້ເຫັນບາງຜົນງານສຳຄັນວ່າ : ໂຄງການບູລະນະມໍລະດົກໂລກພາກໃຕ້ FSP ສຳລັບວັດພູຈຳປາສັກແມ່ນໄດ້ປະກອບສ່ວນສຳຄັນໃນການສ້າງແຜນທີ່ແຫຼ່ງສະຖານບູຮານທີ່ເປັນມໍລະດົກພາກໃຕ້ຂອງລາວ, ເປັນສ່ວນສຳຄັນໃນການສົ່ງເສີມການທ່ອງທ່ຽວດ້ວຍການສ້າງເຄື່ອງມືແນະນຳທາງອິນເຕີເນັດ ເພື່ອເອື້ອອຳນວຍໃຫ້ແກ່ນັກທ່ອງທ່ຽວຊົມພິພິທະພັນວັດພູ ແລະ ສູນສື່ຄວາມໝາຍມໍລະດົກໂລກ, ໂດຍສະເພາະແມ່ນໂຮງຮຽນພາກສະໜາມ ແລະ ການຝຶກອົບຮົມທີ່ສຳເລັດ 100%. ສຳລັບໂຄງການ AFD ມີສ່ວນສຳຄັນເຂົ້າໃນການປັບປຸງແຜນຜັງເມືອງ ສຳເລັດການປັບປຸງກົດລະບຽບຄຸ້ມຄອງການປຸກສ້າງ, ແຜນຜັງຊີ້ນຳລວມ,ແຜນຜັງນຳໃຊ້ທີ່ດິນ ທີ່ນອນໃນເຂດມໍລະດົກໂລກວັດພູຈຳປາສັກ ເຊິ່ງໄດ້ຖືກຮັບຮອງຢ່າງເປັນທາງການໃນລະດັບແຂວງ, ລະດັບກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ລະດັບຊາດໂດຍປະທານຄະນະກຳມະການລະດັບຊາດເພື່ອມໍລະດົກໂລກ ພ້ອມທັງນຳສະເໜີການຮັບຮອງໂດຍອົງການຢູແນສໂກ.

*** ຂ່າວ-ພາບ: ຄຳຫຼ້າ ***